**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------------ 000 -----------

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 1429 /ກປ

ນະຄອນຫຼວງວຽງຈັນ, ວັນທີ 18 NOV 2009

# ແຈ້ງການ

ເຖິງ: ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ

ເລື່ອງ: ເພີ່ມທະວີຄວາມຮັບຜິດຊອບຕໍ່ວຽກງານປ້ອງກັນພືດ

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນພືດ ສະບັບເລກທີ 06 /ສພຊ, ລົງວັນທີ 9/12/2008.
- ອີງຕາມ ສົນທິສັນຍາປ້ອງກັນພືດ ສາກົນ ທີ່ ສປປ ລາວ ເປັນພາຄີ.

ໃນໄລຍະຜ່ານມານີ້ ພັກ ແລະ ລັດຖະບານ ໄດ້ປະກາດໃຊ້ກົດໝາຍວ່າດ້ວຍການປ້ອງກັນພືດ ອັນເຮັດໃຫ້ການຂົນສົ່ງເຄື່ອນຍ້າຍ, ການນຳເຂົ້າ ແລະ ສົ່ງອອກພືດ ແລະ ຜະລິດຕະພັນພືດ ໄດ້ທັນເຂົ້າສູ່ລະບຽບຫຼັກການ ແລະ ສອດຄ່ອງກັບກົດໝາຍເປັນຢ່າງດີ, ການຜະລິດພືດກະສິກຳ ແລະ ຜະລິດຕະພັນກະສິກຳສົ່ງອອກ ກໍໄດ້ຮັບການຄຸ້ມຄອງປ້ອງກັນຈາກການທຳລາຍຂອງສັດຕູພືດ ທີ່ຕິດແປດຮ້າຍແຮງໄດ້ເປັນຢ່າງດີ ແຕ່ເຖິງຢ່າງໃດກໍ່ຕາມປະກົດການແຜ່ລະບາດຂອງສັດຕູພືດໃນບາງທ້ອງຖິ່ນຍັງເກີດມີຢູ່ເຊັ່ນ: ດ້ວງເຈາະຍອດພ້າວ, ແມງວັນທອງເຈາະທຳລາຍໝາກໄມ້ ແລະ ມອດເຈາະໝາກກາເຟ, ສາເຫດດັ່ງກ່າວແມ່ນເກີດຈາກການຂົນສົ່ງເຄື່ອນຍ້າຍ, ການນຳເຂົ້າ ແລະ ສົ່ງອອກພືດ ແລະ ຜະລິດຕະພັນພືດໂດຍບໍ່ໄດ້ຜ່ານຂັ້ນຕອນລະບຽບການການກັກກັນພືດ ແລະ ບໍ່ໄດ້ຮັບການກວດກາຮັບຮອງຈາກເຈົ້າໜ້າທີ່ປ້ອງກັນພືດປະຈຳດ່ານ.

ເພື່ອແກ້ໄຂປະກົດການດັ່ງກ່າວທັງເປັນການຫຼຸດຜ່ອນຄວາມສ່ຽງຕໍ່ການແຜ່ລະບາດຂອງສັດຕູພືດ ແນໃສ່ຮັບປະກັນໃຫ້ງານມະຫາກຳກິລາຊີເກມ ຄັ້ງທີ 25 ທີ່ ສປປ ລາວ ເປັນເຈົ້າພາບ ໃຫ້ມີຄວາມສະຫງົບຮຽບຮ້ອຍດີ.

## ລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ອອກແຈ້ງການ ດັ່ງນີ້:

1. ຄວາມໝາຍ ຂອງວຽກງານປ້ອງກັນພືດ

ການປ້ອງກັນພືດແມ່ນການຄວບຄຸມ, ກວດກາພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນ ໆ ໃນເວລາເຄື່ອນຍ້າຍຈາກພື້ນທີ່ໜຶ່ງໄປຍັງອີກພື້ນທີ່ໜຶ່ງໂດຍປະຕິບັດຕາມລະບຽບກົດໝາຍ ແລະ ໃຫ້ຖືກຕ້ອງຕາມຫຼັກວິຊາການແນໃສ່ຈຳກັດ ແລະ ສະກັດກັ້ນການແຜ່ລະບາດຂອງສັດຕູພືດ, ປ້ອງກັນບໍ່ໃຫ້ສັດຕູພືດລະບາດຈາກເຂດໜຶ່ງໄປຫາອີກເຂດໜຶ່ງ ພາຍໃນປະເທດ ຫຼື ແຜ່ລະບາດ ເຂົ້າມາໃນປະເທດ ແລະ ອອກສູ່ປະເທດອື່ນ.

## 2. ຄວາມຮັບຜິດຊອບ ຂອງ ຂະແໜງການປູກຝັງ ຕໍ່ວຽກງານປ້ອງກັນພືດ

### 2.1. ກົມປູກຝັງ:

ມີໜ້າທີ່ເປັນເສນາທິການ ໃຫ້ແກ່ກະຊວງກະສິກຳ ແລະ ປ່າໄມ້ ໃນການຄຸ້ມຄອງການອອກ ໃບອະນຸຍາດນຳເຂົ້າພືດ ທັງປະສານສົມທົບກັບພາກສ່ວນອື່ນໆ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງທັງ ພາຍໃນ ແລະ ຕ່າງປະເທດ, ໂດຍເປັນຈຸດໃຈກາງໃນການສ້າງບົດເຕັກນິກ ຕອບສະໜອງຂໍ້ມູນຂ່າວສານທີ່ຈຳເປັນ ພ້ອມທັງອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດ ແລະ ຕິດຕາມປະເມີນຜົນການຈັດຕັ້ງປະຕິບັດວຽກງານປ້ອງກັນພືດຂອງຂະແໜງການສາຍຕັ້ງ ໃນຂອບເຂດທົ່ວປະເທດ.

### 2.2. ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນ :

ມີໜ້າທີ່ໃນການຜັນຂະຫຍາຍ, ແນະນຳ, ໂຄສະນາ ແລະ ເຜີຍແຜ່ ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານປ້ອງກັນພືດ ເພື່ອຈັດຕັ້ງປະຕິບັດໃນຂອບເຂດຄວາມຮັບຜິດຊອບຂອງຕົນ ພ້ອມທັງປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນໃຫ້ເຂົ້າໃຈ, ເຊື່ອມຊຶມ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ ໂດຍຊີ້ນຳ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານປ້ອງກັນພືດຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ ແລະ ດ່ານປ້ອງກັນພືດ ເພື່ອສະຫຼຸບລາຍງານໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປະຈຳ.

### 2.3. ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ :

ມີໜ້າທີ່ໃນການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ, ແນະນຳ ແລະ ໂຄສະນາ ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານປ້ອງກັນພືດ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ພາຍໃນເມືອງ, ເທດສະບານ ເຊື່ອມຊຶມ ເຂົ້າໃຈ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ. ຕິດຕາມ ແລະ ລາຍງານສະພາບການແຜ່ລະບາດ ຂອງສັດຕູພືດ ແລະ ການຈັດຕັ້ງປະຕິບັດວຽກງານປ້ອງກັນພືດໃຫ້ສາຍການຈັດຕັ້ງຂອງຕົນ ແລະ ອົງການປົກຄອງເມືອງ, ເທດສະບານຕາມຂອບເຂດຄວາມຮັບຜິດຊອບຂອງຕົນໃນແຕ່ລະໄລຍະ.

### 2.4. ດ່ານປ້ອງກັນພືດ :

ມີໜ້າທີ່ ໃນການໂຄສະນາເຜີຍແຜ່ ລະບຽບກົດໝາຍ ກ່ຽວກັບ ການປ້ອງກັນພືດ ແລະ ຈັດຕັ້ງປະຕິບັດຕາມພາລະບົດບາດ ແລະ ຫຼັກວິຊາການຢ່າງຖືກຕ້ອງ ແລະ ທັນຕາມກຳນົດເວລາ. ສະກັດກັ້ນການລະເມີດລະບຽບກົດໝາຍກ່ຽວກັບການປ້ອງກັນພືດ; ດຳເນີນຄະດີຕໍ່ຜູ້ກະທຳຜິດ, ກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງເອກະສານ ພ້ອມທັງອຳນວຍຄວາມສະດວກ ໃຫ້ແກ່ການສົ່ງອອກ-ນຳເຂົ້າພືດ, ຜະລິດຕະພັນພືດຢ່າງວ່ອງໄວ ແລະ ຖືກຕ້ອງຕາມລະບຽບກົດໝາຍ, ນອກນີ້ຍັງສາມາດກັກແຍກປ່ຽວພືດ ຜະລິດຕະພັນພືດ ຫຼື ແຈ້ງໃຫ້ເຈົ້າຂອງພືດ ເຮັດສຸຂານາໄມພືດ ຫຼື ສົ່ງຄືນ ຫຼື ທຳລາຍພືດ ໃນກໍລະນີທີ່ພົບເຫັນສັດຕູພືດ, ເກັບຄ່າທຳນຽມ ແລະ ຄ່າບໍລິການຕາມລະບຽບການຂອງລັດວາງອອກ ຢ່າງຄົບຖ້ວນ.

### 3. ເຈົ້າໜ້າທີ່ປ້ອງກັນພືດ

ເຈົ້າໜ້າທີ່ປ້ອງກັນພືດມີໜ້າທີ່ໃນການ ຈັດຕັ້ງປະຕິບັດຕາມພາລະບົດບາດ ແລະ ຫຼັກວິຊາການ ຢ່າງຖືກຕ້ອງ ແລະ ທັນ ຕາມກຳນົດເວລາທີ່ດ່ານປ້ອງກັນພືດ ແລະ ຕ້ອງແມ່ນບຸກຄົນທີ່ຖືກແຕ່ງຕັ້ງຈາກ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນໂດຍມີບັດປະຈຳດ່ານທີ່ໄດ້ຈາກການຝຶກອົບຮົມ ແລະ ຮັບຮອງທາງດ້ານວິຊາການຈາກກົມປູກຝັງ. ໃນເວລາປະຕິບັດໜ້າທີ່ ເຈົ້າໜ້າທີ່ປ້ອງກັນພືດຕ້ອງນຸ່ງເຄື່ອງແບບ ທີ່ມີເຄື່ອງໝາຍ ແລະ ຖືບັດປະຈຳດ່ານທີ່ກຳນົດໂດຍກົມປູກຝັງ. ເຈົ້າໜ້າທີ່ປ້ອງກັນພືດສາມາດມີ ວິຊາການຊ່ວຍແຕ່ຕ້ອງໄດ້ຜ່ານການຝຶກອົບຮົມ ແລະ ມີບັດວິຊາການຊ່ວຍປ້ອງກັນພືດ ອອກໃຫ້ໂດຍ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນ ຕາມກຳນົດໝາຍເຕັກນິກທີ່ກົມປູກຝັງກຳນົດໄວ້.

### 4. ການຂໍອະນຸຍາດ ແລະ ການກວດກາພືດ ຂາເຂົ້າ-ອອກ

ຫ້າມອົງການຈັດຕັ້ງ, ບໍລິສັດ ຫຼື ບຸກຄົນໃດໜຶ່ງ ນຳເຂົ້າສິນຄ້າພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນ ທີ່ຖືກຄວບຄຸມພາຍໃຕ້ກົດໝາຍວ່າດ້ວຍການປ້ອງກັນພືດ ເວັ້ນເສຍແຕ່ໄດ້ຮັບອານຸຍາດເປັນທາງການຈາກກົມປູກຝັງ ແລະ ການນຳເຂົ້າພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນດັ່ງກ່າວນັ້ນ ຕ້ອງຜ່ານດ່ານປ້ອງກັນພືດທີ່ໄດ້ຮັບອະນຸຍາດສ້າງຕັ້ງຈາກກະຊວງກະສິກຳ ແລະ ປ່າໄມ້ ຢ່າງເປັນທາງການ.

### 4.1. ການນຳເຂົ້າພືດ ຕິດຕົວ ຜູ້ໂດຍສານ ຫຼື ສິ່ງທາງໄປສະນີ

ການນຳເຂົ້າພືດຕິດຕົວຜູ້ໂດຍສານ ຫຼື ສິ່ງທາງໄປສະນີເຈົ້າຂອງພືດມີພັນທະແຈ້ງຂໍ້ມູນຕາມແບບຮ່າງທີ່ໄດ້ກຳນົດໄວ້ ແລະ ໄດ້ຮັບການກວດກາຈາກເຈົ້າໜ້າທີ່ປ້ອງກັນພືດ ຕາມລະບຽບການ.

### 4.2. ການນຳເຂົ້າພືດ ແລະ ຜະລິດຕະພັນພືດ ທີ່ເປັນສິນຄ້າ

ເຈົ້າຂອງພືດຈະຕ້ອງຂໍອະນຸຍາດຈາກກົມປູກຝັງລ່ວງໜ້າ 01 (ໜຶ່ງ) ອາທິດ ເພື່ອວິໃຈຄວາມສ່ຽງຂອງສັດຕູພືດ ແລະ ກຳນົດມາດຕະການທາງສຸຂານາໄມພືດ ໂດຍຍື່ນໃບສະເໜີຂໍອະນຸຍາດນຳເຂົ້າ ຕາມແບບຮ່າງທີ່ໄດ້ກຳນົດໄວ້. ຜູ້ໄດ້ຮັບອະນຸຍາດໃຫ້ນຳເຂົ້າ ຕ້ອງນຳເຂົ້າສິນຄ້າຕາມປະເພດ ແລະ ຈຳນວນທີ່ໄດ້ອະນຸຍາດ ແລະ ນຳເຂົ້າຕາມດ່ານທີ່ກຳນົດໄວ້ເທົ່ານັ້ນ. ເມື່ອສິນຄ້າມາເຖິງດ່ານເຈົ້າຂອງສິນຄ້າຕ້ອງນຳເອກະສານ ທີ່ກ່ຽວຂ້ອງ ທີ່ອອກໃຫ້ໂດຍປະເທດຕົ້ນທາງແຈ້ງຕໍ່ເຈົ້າໜ້າທີ່ປ້ອງກັນພືດກວດກາຄວາມຖືກຕ້ອງ.

ການນຳເຂົ້າແມ່ນລວມທັງການນຳເຂົ້າໃນຮູບການອື່ນທີ່ຍັງບໍ່ທັນໄດ້ກຳນົດໄວ້ເປັນຕົ້ນແມ່ນເພື່ອຈຸດປະສົງຄົ້ນຄວ້າທົດລອງ, ສົ່ງເສີມ, ວາງສະແດງ, ຮັບໃຊ້ທາງການ, ຮັບຈາກການ ຊ່ວຍເຫຼືອ ຂອງຕ່າງປະເທດ ແລະ ຂອງຂວັນ.

ເຈົ້າໜ້າທີ່ປ້ອງກັນພືດຕ້ອງຈັດຕັ້ງການກວດກາພືດ ແລະ ລາຍງານຜົນການກວດກາພາຍໃນ 24 ຊົ່ວໂມງ ຫຼັງຈາກໄດ້ຮັບໃບສະເໜີ ຈາກເຈົ້າຂອງພືດ. ໃນກໍລະນີ ທີ່ພົບເຫັນສັດຕູພືດ ເຈົ້າໜ້າທີ່ປ້ອງກັນພືດ ຕ້ອງແຈ້ງໃຫ້ເຈົ້າ ຂອງພືດຊາບແລ້ວດຳເນີນມາດຕະການສຸຂານາໄມພືດ ຄື ການອະນາໄມພືດ ຫຼື ສົ່ງກັບປະເທດຕົ້ນທາງ ຫຼື ທຳລາຍຖິ້ມແລ້ວແຕ່ກໍລະນີຢ່າງເຂັ້ມງວດຕາມຫຼັກວິຊາການ ແລະ ເມື່ອພືດທີ່ນຳເຂົ້າຖືກປະຕິບັດ

ຕາມຂໍ້ກຳນົດ ພາຍຫຼັງກວດກາແລ້ວ ຕ້ອງໄດ້ຮັບອະນຸຍາດໃຫ້ຜ່ານໃນທັນທີ ໂດຍປະທັບກາຈ້ຳຜ່ານ ຈາກດ່ານປ້ອງກັນພືດ ແລະ ລາຍເຊັນຂອງເຈົ້າໜ້າທີ່ປະຈຳດ່ານໃສ່ໃບສະເໜີ. ເຈົ້າຂອງພືດຮັບຜິດຊອບຈ່າຍຄ່າທຳນຽມຕ່າງໆ ຕາມລະບຽບການຂອງລັດວາງອອກຢ່າງຄົບຖ້ວນ.

### 4.3. ການກວດກາພືດ ຜ່ານແດນ

ເຈົ້າຂອງພືດ ຕ້ອງຍື່ນໃບສະເໜີ ກວດກາພືດຜ່ານແດນ ຕໍ່ດ່ານປ້ອງກັນພືດ ເພື່ອຂໍຮັບ ການກວດກາ ແລະ ຢັ້ງຢືນ ຄວາມປອດໄພ ແລະ ຄວາມຖືກຕ້ອງ ຂອງໃບຢັ້ງຢືນສຸຂານາໄມພືດ, ຜະລິດຕະພັນພືດ, ວັດຖຸອື່ນໆ. ພາຍທີ່ໄດ້ຮັບໃບສະເໜີຈາກເຈົ້າຂອງພືດເຈົ້າໜ້າທີ່ປ້ອງກັນພືດ ຕ້ອງຈັດຕັ້ງການກວດກາພືດ ແລະ ລາຍງານ ຜົນການກວດກາພາຍໃນ 24 ຊົ່ວໂມງ ເມື່ອພືດທີ່ສົ່ງຜ່ານຖືກປະຕິບັດຕາມຂໍ້ກຳນົດພາຍຫຼັງກວດກາ ແລ້ວຕ້ອງ ໄດ້ຮັບອະນຸຍາດໃຫ້ຜ່ານໃນທັນທີ.

### 4.4. ການກວດກາພືດ ຂາອອກ

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງສົ່ງອອກພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນ ຕ້ອງສະເໜີຕໍ່ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ແຂວງ ນະຄອນທີ່ກຳນົດໄວ້ ເພື່ອກວດກາ ແລະ ຢັ້ງຢືນສຸຂານາໄມ ຕາມເງື່ອນໄຂຄວາມຕ້ອງການຂອງ ປະເທດປາຍທາງ.

## 5. ການປ້ອງກັນພືດພາຍໃນ

ຄອບຄົວ ຫຼື ການຈັດຕັ້ງ ທີ່ພົບເຫັນປະກົດການການທຳລາຍ ຫຼື ການແຜ່ລະບາດຂອງສັດຕູພືດຢູ່ພື້ນທີ່ໃດນຶ່ງ ຕ້ອງລາຍງານ ຕໍ່ຂະແໜງການ ກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງຢ່າງຮີບດ່ວນ. ໃນກໍລະນີທີ່ເກີດການແຜ່ລະບາດຂອງສັດຕູພືດຂະແໜງການປູກຝັງທີ່ຮັບຜິດຊອບວຽກງານປ້ອງກັນພືດຕ້ອງ ສະເໜີລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອປະກາດເຂດສັດຕູພືດລະບາດ ແລະນຳໃຊ້ ມາດຕະການຄວບຄຸມການແຜ່ລະບາດແລ້ວແຕ່ກໍລະນີຕາມທີ່ກຳນົດໄວ້ໃນກົດໝາຍປ້ອງກັນພືດ.

## 6. ຜູ້ປະກອບການ ດ້ານສຸຂານາໄມພືດ

ບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງໃຫ້ບໍລິການການກຳຈັດ ສັດຕູພືດ ແລະ ການສຸຂານາໄມພືດ ຕ້ອງປະຕິບັດຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ ແລະ ຕ້ອງໄດ້ຜ່ານການອະນຸຍາດດ້ານວິຊາການຈາກກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້.

## 7. ມາດຕະການຈັດຕັ້ງປະຕິບັດ

- ໃຫ້ກົມປູກຝັງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເຜີຍແຜ່ຂໍ້ມູນຂ່າວສານໃຫ້ແກ່ມວນຊົນ ແລະ ສ້າງກົນໄກການປະສານງານກັບອົງການຕ່າງໆ ທີ່ກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດວຽກງານປ້ອງກັນພືດໃຫ້ມີປະສິດທິຜົນສູງສຸດ.

ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນ ເກັບຂໍ້ມູນ ແລະ ລາຍງານ ດ່ານຊາຍແດນແລກປ່ຽນສິນຄ້າທີ່ບໍ່ທັນໄດ້ຮັບອານຸມັດຈັດຕັ້ງເປັນດ່ານປ້ອງກັນພືດຈາກ ກະຊວງກະສິກຳ ແລະ ປ່າໄມ້ ສົ່ງໃຫ້ກະຊວງ ເພື່ອອອກຂໍ້ຕົກລົງສ້າງຕັ້ງເປັນດ່ານປ້ອງກັນພືດ ເພື່ອໃຫ້ສອດຄ່ອງກັບແຈ້ງການຂອງຄະນະເລຂາທິການລັດຖະບານ ສະບັບເລກທີ 405/ຄລບ ລົງວັນທີ 14/3/2007.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດແຈ້ງການສະບັບນີ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ລັດຖະມົນຕີ ວ່າການ ກະຊວງກະສິກຳ ແລະ ປ່າໄມ້

ສີດາເຮັ້ງ ຣາຊະພົນ

*ບ່ອນສົ່ງ:*

| | | |
|---|---|---|
| ຫ້ອງວ່າການສູນກາງພັກ | 1 | ສະບັບ (ໃຊ້ຕາງລາຍງານ) |
| ຫ້ອງການເລຂາທິການລັດຖະບານ | 1 | ສະບັບ (ໃຊ້ຕາງລາຍງານ) |
| ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 1 | ສະບັບ (ໃຊ້ຕາງລາຍງານ) |
| ຫ້ອງການກະຊວງການເງິນ | 1 | ສະບັບ (ເພື່ອຊາບ) |
| ຫ້ອງການກະຊວງ ປ້ອງກັນຄວາມສະຫງົບ | 1 | ສະບັບ (ເພື່ອຊາບ) |
| ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ | 1 | ສະບັບ (ເພື່ອຊາບ) |
| ຫ້ອງວ່າການປົກຄອງແຂວງ ແລະ ນະຄອນຫຼວງ | ບ່ອນລະ 1 | ສະບັບ (ເພື່ອຊ່ວຍຊີ້ນຳ) |
| ກົມກອງສະຖາບັນອ້ອມຂ້າງກະຊວງ ກປ. | ບ່ອນລະ 1 | ສະບັບ (ເພື່ອຕິດຕາມຊຸກຍູ້) |
| ດ່ານເຂົ້າ-ອອກເມືອງ ສາກົນ | ບ່ອນລະ 1 | ສະບັບ (ເພື່ອປະຕິບັດ) |
| ເກັບມ້ຽນ | 1 | ສະບັບ |